ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ລາວອາໂກຣເທັກ ເອຈ.ເອ.ພີ.ຈ
LAO AGROTECH PUBLIC COMPANY
ບ້ານຫນອງຄັນຄູ ເມືອງນາຊາຍທອງ
ແຂວງນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ 030-988-2809

ເລກທີ: 127/ລອທ

ນະຄອນຫຼວງວຽງຈັນ,ເລກທີ: 14 OCT 2024

ຮຽນ : ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບລາວ ທີ່ນັບຖື.

ທ່ານ ຜູ້ອໍານວຍການໃຫ່ຍຕະຫຼາດຫຼັກຊັບລາວ ທີ່ນັບຖື.

ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື.

ເລື່ອງ : ລາຍງານ ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນປັບປຸງແກ້ໄຂການຂາດທຶນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ປະຈໍາໄຕມາດ3 ປີ 2024.

- ອີງຕາມ ລະບຽບວ່າດ້ວຍການຈົດທະບຽນຮຸ້ນ(ສະບັບປັບປຸງ) ເລກທີ 007/23 ຕລຊລ, ລົງວັນທີ 12 ກັນຍາ 2023 ມາດຕາ 26.
- ອີງຕາມ ໜັງສື ແຈ້ງການກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ 1310/ ຕລຊລ, ລົງວັນທີ 09 ຕຸລາ 2024
- ອີງຕາມ ບົດລາຍງານ ຄວາມຄືບໜ້າການຂາດທຶນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ປະຈໍາປີ 2024 ສະບັບເລກທີ 089/ລອທ,ລົງວັນທີ 09 ກໍລະກົດ 2024

ບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບ ກ່ຽວກັບ ລາຍງານຄວາມຄືບ ໜ້າການຈັດຕັ້ງປະຕິບັດແຜນປັບປຸງແກ້ໄຂການຂາດທຶນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ສະບັບເລກທີ 089/ ລອທ,ລົງວັນທີ 09 ກໍລະກົດ 2024. ໃນຊ່ວງປະຈໍາໄຕມາດ3 ປີ 2024 ທີ່ຜ່ານມາ. ຝ່ານການດໍາເນີນທຸລະກິດ ເຫັນວ່າ ບໍລິສັດ ມີ ລາຍຮັບເພີ່ມຂຶ້ນ ຈາກການຂາຍສິນຄ້າ ແລະ ການບໍລິການຜະລິດຕະພັນ. ເພີ່ມຂຶ້ນໃນອັດຕາສ່ວນ 10,08% ເມື່ອທຽບໃສ່ກັບໄຕ ມາດທີ່ຜ່ານມາ ເຊິ່ງເປັນມູນຄ່າທັງໝົດ 9,525.60 ລ້ານກີບ ການເພີ່ມຂຶ້ນດັ່ງກ່າວໄດ້ມາຈາກການຂາຍສິນຄ້າ ດັ່ງນີ້:

ລາຍການສິນຄ້າ	ລາຍໄດ້(ລ້ານກີບ)	ເພີ່ມຂຶ້ນ (ທຽບໄຕ)
ນໍ້າມັນປາມດິບCPO	8,631.0	27,22%
ຕົ້ນກ້າປາມ	130.1	(2,51%)
ກາກປາມ	342.0	(7,90%)
ປຸ໋ຍ	185.5	(8,82%)
ລາຍໄດ້ອື່ນໆ	237.0	2,09%
ລວມ	9,525.6	10,08%

❖ ບໍລິສັດຈະສືບຕໍ່ແຜນການດໍາເນີນທຸລະກິດ

ການຄາດຄະເນຂອງບໍລິສັດຈະມີການຂາຍສິນຄ້າ ແລະ ການບໍລິການຜະລິດຕະພັນໃນໄຕມາດທີ 4 ຄາດວ່າຈະ ເພີ່ມຂຶ້ນໃນອັດຕາສ່ວນ 15% ເຊິ່ງຈະເປັນມູນຄ່າທັງໝົດ 10,954.44 ລ້ານກີບ ໃນໄຕມາດ4 ປີ 2024.

- ແຜນການຂາຍນ້ຳມັນປາມດິບ ບໍລິສັດຄາດຄະເນການຂາຍໂດຍອີງໃສ່ການຜະລິດຂອງບໍລິສັດ. ບວກກັບຄວາມຕ້ອງການຂອງຜູ້ບໍລິໂພກ.
- ແຜນການຂາຍປາມ: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ຄວາມຕ້ອງການຊື້ຂອງຜູ້ບໍລິໂພກໃນປະຈຸບັນ.
- ແຜນການຂາຍປຸ໋ຍ ໃນໄລຍະປີ 2019-2021 ເນື່ອງຈາກສະພາບການລະບາດໂຄວິດ-19 ບໍລິສັດຂາດກະສິ່ງເສີມຊາວກະສິກອນ, ເຮັດໃຫ້ຜົນຜະລິດປາມໃນປີຜ່ານມາຫຼຸດລົງຫຼາຍ, ໃນປີ 2024 ບໍລິສັດໄດ້ສິ່ງເສີມຊາວກະສິກອນ (ລູກສອນບໍລິສັດ ແລະ ສອນນອກບໍລິສັດ) ເພື່ອໃສ່ປຸ໋ຍປາມຕື່ມ
- ຍິ່ງໄປກວ່ານັ້ນ, ບໍລິສັດໄດ້ຄົ້ນຄ້ວາເຕັກໂນໂລຊີໃຫມ່ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍໃນການຜະລິດຕໍ່ໄປ

ດັ່ງນັ້ນ, ຈຶ່ງເຮັດບົດລາຍງານ ສະບັບນີ້ຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ
ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ເສດ ພັດທະນະມາດ
Zait PATTANAMAS